ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ
(ຊື່ເດີມ "ບໍລິສັດ ຊີມັ້ງລາວ ມະຫາຊົນ")

ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2023

EY
Building a better working world

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 9
ໃບລາຍງານຖານະການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ	10 - 11
ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດແບບແຍກກິດຈະການ	12
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບຈຸດປະສົງພິເສດແບບແຍກກິດຈະການ	13
ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດແບບແຍກກິດຈະການ	14 - 15
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ	16 – 36

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ້ງລາວ ມະຫາຊົນ")

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ້ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ້ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການຄ້າ, ເຊິ່ງ ບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັ້ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັ້ງເພື່ອການຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈທວ ສຳຫຼັບການປ່ຽນຊື່ ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ຈຳກັດ ມາເປັນ ບໍລິສັດ ຊີມັ້ງລາວ ມະຫາຊົນ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/MPI, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ.

ວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທວ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳຫຼັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ຈຳກັດ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳ ມະຫາຊົນ.

ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັ້ງ ແລະ ຜະລິດຕະພັນຊີມັ້ງອື່ນໆທີ່ກ່ຽວຂ້ອງ ມາເປັນການທ່ອງທ່ຽວ ແລະ ການກໍ່ສ້າງສວນອັດທະນະທຳ, ໂຮງແຮມ ແລະ ຕຶກອາຄານຄອນໂດ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2023 ມີດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັ້ນ*
ບໍລິສັດ ການຮ່ວມມືເສດຖະກິດ-ເຕັກນິກສາກົນ ຢຸນນານ ສປ ຈີນ ຈຳກັດ(CYC)	14,280,000	35.6964%
ລັດວິສາຫະກິດພັດທະນາກະສິກຳ -ອຸດສາຫະກຳ ແລະບໍລິການຂາ ອອກ-ຂາເຂົ້າ (DAI)	13,720,000	34.2966%
ບໍລິສັດ ຫຼັກຊັບລາວ - ຈີນ (LCS)	7,547,800	18.8676%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.1394%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງ ມີໂຮງງານຊີມັ້ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ປະທານ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຢາງ ຊຸນ ຢິນ	ປະທານ	ລາອອກ 9 ມີນາ 2023
ທ່ານ ວັນທອງ ສິດທິກຸນ	ຮອງປະທານ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ຈ່າງ ຈິ່ງຫົວ	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານນາງ ຊ້າຍ ຫລິງຫລິງ	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຕົ໋ງ ເຊີ້ນຊູ້	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຫຼຸ ຫຼິນ	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຄຳບົນ ໄຊເລົ່າວົງ	ສະມາຊິກ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ວິຈິດ ສຸວັນນະລາດ	ສະມາຊິກ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ໄຕ ຢອງຫົວ	ສະມາຊິກອິດສະລະ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຫລີ ຮ້າວ	ສະມາຊິກອິດສະລະ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ວົງວິຈິດ ແກ້ວວົງກິດ	ສະມາຊິກອິດສະລະ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ເຈຍ ຢ້າວຈີ້	ສະມາຊິກ	ລາອອກ 9 ມີນາ 2023
ທ່ານ ຈ່າງ ລີ້	ສະມາຊິກ	ລາອອກ 9 ມີນາ 2023
ທ່ານ ອຸຢາງ ຈີ້ຢົງ	ສະມາຊິກ	ລາອອກ 9 ມີນາ 2023
ທ່ານ ສ່ຽວ ເຈຍ	ສະມາຊິກອິດສະລະ	ລາອອກ 9 ມີນາ 2023
ທ່ານ ຫຼີ ຊຸນໂປ	ສະມາຊິກອິດສະລະ	ລາອອກ 9 ມີນາ 2023

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນປີ ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ເນັຍ ເຫຼຍ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຈ່າງ ລີ້	ຜູ້ອຳນວຍການໃຫຍ່	ລາອອກ 9 ມີນາ 2023
ທ່ານ ວິຈິດ ສຸວັນນະລາດ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ຫຼຸ ຫຼິນ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຈ່າງ ຈິ່ງຫົວ	ຜູ້ອຳນວຍການ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຄຳບົນ ໄຊເລົ່າວົງ	ຜູ້ອຳນວຍການ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ຊຽງ ລຽງອຸ	ຜູ້ອຳນວຍການ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ວົງວິຈິດ ແກ້ວວົງກິດ	ຜູ້ອຳນວຍການ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ຫຼີ ຊຸນໂປ	ຜູ້ອຳນວຍການ	ລາອອກ 9 ມີນາ 2023
ທ່ານ ເຈຍ ຢ້າວຈີ້	ຜູ້ອຳນວຍການ	ລາອອກ 9 ມີນາ 2023
ທ່ານ ສ່ຽວ ເຈຍ	ຜູ້ອຳນວຍການ	ລາອອກ 9 ມີນາ 2023

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີ ແລະ ນະອັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ວັນທີລາອອກ*
ທ່ານ ໄຕ ຢອງຫົວ	ປະທານ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ສ່ຽວ ເຈຍ	ປະທານ	ລາອອກ 9 ມີນາ 2023
ທ່ານ ຕິ້ງ ເຊິ້ນຊູ	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ວິງວິຈິດ ແກ້ວວິງກິດ	ສະມາຊິກ	ແຕ່ງຕັ້ງ 23 ມິຖຸນາ 2020
ທ່ານ ຫລິວ ຮ້າວ	ສະມາຊິກ	ແຕ່ງຕັ້ງ 9 ມີນາ 2023
ທ່ານ ຫຼີ ຊຸນ ໂປ	ສະມາຊິກ	ລາອອກ 9 ມີນາ 2023

ຜູ້ຕາງໜ້າທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດແຕ່ວັນທີ 1 ມັງກອນ 2023 ຫາ ວັນທີ 8 ມີນາ 2023 ແມ່ນ ທ່ານ ຈ່າງ ລີ ຜູ້ອຳນວຍການໃຫຍ່ ແລະ ຕັ້ງແຕ່ວັນທີ 9 ມີນາ 2023 ຫານະວັນທີບົດລາຍງານສະບັບນີ້ແມ່ນ ທ່ານ ເນ້ຍ ເຫຼີຍ ຜູ້ອຳນວຍການໃຫຍ່ ແລະ ປະທານສະພາບໍລິຫານ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ້ງ ລາວ ຈຳກັດ.

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັງລາວ ມະຫາຊົນ")

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການ ບໍລິສັດ ຊີມັງລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2023.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫລອດເວລາ ແລະ ຮັບປະກັນວ່າ ເອກະສານລາຍງານການເງິນແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ຂໍຖະແຫລງວ່າເອກະສານລາຍງານການເງິນແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຂອງຄະນະອຳນວຍການ:

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ໄມ້ຍເຫຼ່ຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 11728747/67876709

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການຂອງ ບໍລິສັດ ກຸ່ມ ບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ນະວັນທີ 31 ທັນວາ 2023, ແລະ ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດແບບແຍກກິດຈະການ , ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບຈຸດປະສົງພິເສດແບບແຍກກິດຈະການ ແລະ ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດແບບແຍກກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ລວມທັງນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການຂອງບໍລິສັດໄດ້ຖືກກະກຽມ ໂດຍຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບນະໂຍບາຍການບັນຊີ ທີ່ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານໃນການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ໂດຍອີງຕາມມາດຕະຖານ ວ່າດ້ວຍການກວດສອບສາກົນ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນໄດ້ຖືກອະທິບາຍເພີ່ມຕື່ມໃນຫົວ *ຄວາມຮັບຜິດຊອບຂອງພັກກວດສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າ ເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່:

- ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ທີ່ໄດ້ລະບຸວ່າບໍລິສັດໄດ້ກະກຽມ ແລະ ນຳສະເໜີບົດລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ສຳລັບນະປີສິ້ນສຸດ ວັນທີ 31 ທັນວາ ປີ 2023 ຕາມກົດໝາຍວ່າດ້ວຍການບັນຊີຂອງ ສ.ປ.ປ ລາວ ແລະ ຕາມກົດລະບຽບທີ່ກຳນົດໂດຍ ກະຊວງການເງິນຂອງ ສ.ປ.ປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີບົດລາຍງານການເງິນແບບສຳລັບຈຸດປະສົງພິເສດແບບແຍກກິດຈະການ ເຊິ່ງບໍ່ໄດ້ກຳນົດໃຫ້ບໍລິສັດທີ່ມີບໍລິສັດໃນເຄືອຈະຕ້ອງກະກຽມບົດລາຍງານການເງິນແບບສັງລວມກິດຈະການ.

  ນອກຈາກນີ້, ອີງຕາມກົດໝາຍວ່າຫຼັກຊັບຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, ບໍລິສັດຈົດທະບຽນເຊິ່ງເປັນກຸ່ມ ບໍລິສັດຖືກກຳນົດໃຫ້ກະກຽມເອກະສານລາຍງານການເງິນແບບສັງລວມກິດຈະການ. ຢ່າງໃດກໍ່ຕາມ, ບໍລິສັດໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວສຳລັບການບໍ່ກະກຽມເອກະສານລາຍງານການເງິນແບບສັງລວມກິດຈະການສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ເນື່ອງຈາກບໍລິສັດພວມຢູ່ໃນຂັ້ນຕອນການຟື້ນຟູບໍລິສັດ. ດັ່ງນັ້ນ, ບໍລິສັດບໍ່ໄດ້ກະກຽມເອກະສານງານການເງິນແບບສັງລວມກິດຈະການສຳລັບປີສິ້ນສຸດວັນທີ 31 ທັນວາ 2023.

A member firm of Ernst & Young Global Limited

- ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ທີ່ໄດ້ລະບຸວ່າ ບົດລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການທີ່ໄດ້ອະທິບາຍເຖິງນະໂຍບາຍການບັນຊີທີ່ນຳຖືກນຳໃຊ້. ນະໂຍບາຍບັນຊີດັ່ງກ່າວ ບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ, ຜົນການດຳເນີນງານສຳລັບຈຸດປະສົງພິເສດແບບແຍກກິດຈະການ ແລະ ກະແສເງິນສົດສຳລັບຈຸດປະສົງພິເສດແບບແຍກກິດຈະການເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2, ບົດລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການຖືກກະກຽມເພື່ອຊ່ວຍເຫຼືອຄະນະອຳນວຍການບໍລິສັດໃນການລາຍງານຕາມຂໍ້ກຳນົດໃຫ້ແກ່ເຈົ້າຂອງບໍລິສັດ. ດັ່ງນັ້ນ, ບົດລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການອາດຈະບໍ່ເໝາະສົມສຳລັບຈຸດປະສົງອື່ນ. ບົດລາຍງານຂອງພວກຂ້າພະເຈົ້າມີຈຸດປະສົງເພື່ອເປັນຂໍ້ມູນ ແລະ ນຳໃຊ້ໂດຍຄະນະອຳນວຍການຂອງບໍລິສັດ ແລະ ເຈົ້າຂອງເທົ່ານັ້ນ ແລະ ບໍ່ຄວນຖືກແຈກຢາຍ ຫຼື ນຳໃຊ້ໂດຍພາກສ່ວນອື່ນ.

ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ຄວາມບໍ່ແນ່ນອນທີ່ສຳຄັນຕໍ່ກັບຄວາມສືບເນື່ອງໃນການດຳເນີນງານທຸລະກິດ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ທີ່ໄດ້ລະບຸວ່າ ບໍລິສັດມີກຳໄລສຸດທິຈາກລາຍຮັບອື່ນໆຈາກການດຳເນີນງານ 1.8 ຕື້ກີບ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023. ນະວັນທີສິ້ນສຸດດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມ 75 ຕື້ກີບ ເຊິ່ງເກີນທຶນຈົດທະບຽນທີ່ຈັດສັນໄວ້ 55 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງບໍລິສັດຫຼາຍກວ່າຊັບສິນໝຸນວຽນ 49.7 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2, ເຫດການ ຫຼື ເງື່ອນໄຂດັ່ງກ່າວ ແລະ ບັນຫາອື່ນໆທີ່ໄດ້ລະບຸໃນບົດອະທິບາຍເລກທີ 2, ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດຂໍ້ສົງໄສຢ່າງທີ່ເປັນສາລະສຳຄັນກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ. ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດຢ່າງມືອາຊີບຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍທີ່ສຸດໃນການກວດສອບເອກະສານລາຍງານການເງິນຂອງປີປະຈຸບັນ ນອກຈາກ ບັນຫາທີ່ໄດ້ອະທິບາຍໃນຫົວຂໍ້ ຄວາມບໍ່ແນ່ນອນທີ່ສຳຄັນຕໍ່ກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ຂ້າງເທິງ, ພວກຂ້າພະເຈົ້າໄດ້ກຳນົດບັນຫາທີ່ໄດ້ອະທິບາຍຂ້າງລຸ່ມນີ້ເປັນບັນຫາທີ່ສຳຄັນໃນການກວດສອບເພື່ອເປີດເຜີຍໃນບົດລາຍງານຂອງພວກຂ້າພະເຈົ້າ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການທີ່ກວດສອບໂດຍພວກຂ້າພະເຈົ້າໂດຍລວມ, ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ, ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນຍ່ອຍກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາລຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາເຊິ່ງຖືກສະໜອງໃນເນື້ອໃນດັ່ງກ່າວ.

ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນວັກຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການໃນບົດລາຍງານຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາທີ່ເຫຼົ່ານີ້. ດັ່ງນັ້ນ, ການກວດສອບຂອງພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການສຳລັບຈຸດປະສົງພິເສດແບບແຍກກິດຈະການ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອຊອກຫາບັນຫາດັ່ງລຸ່ມນີ້, ສະໜອງພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານລາຍງານທາງການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ.

A member firm of Ernst & Young Global Limited

Building a better working world

ການເສື່ອມມູນຄ່າຂອງເຄື່ອງໃນສາງ

ນະວັນທີ 31 ທັນວາ 2023, ບໍລິສັດໄດ້ນຳສະເໜີມູນຄ່າສຸດທິທັງໝົດຂອງເຄື່ອງໃນສາງໃນມູນຄ່າ 6.9 ຕື້ ກີບ, ລວມທັງເງິນແຮໃນມູນຄ່າ 11.1 ຕື້ ກີບ. ຍອດທັງໝົດຂອງເຄື່ອງໃນສາງແມ່ນເທົ່າກັບ 13.2% ຂອງຊັບສິນທັງໝົດຂອງບໍລິສັດ. ພວກຂ້າພະເຈົ້າ ໄດ້ພິຈາລະນາການຕີມູນຄ່າຂອງເຄື່ອງສາງເປັນບັນຫາສຳຄັນໃນການກວດສອບ ເນື່ອງຈາກ (ກ) ຜົນກະທົບຂອງການດັດແກ້ເງິນແຮເຄື່ອງໃນສາງແມ່ນມີສາລະສຳຄັນຕໍ່ກຳໄລ ຫຼື ຂາດທຶນພາຍໃນປີ, ແລະ (ຂ) ການຄິດໄລ່ການເສື່ອມມູນຄ່າຂອງເຄື່ອງໃນສາງແມ່ນຈະຕ້ອງໃຊ້ດຸນພິນິດທີ່ສຳຄັນໃນການກຳນົດມູນຄ່າເສື່ອມ ແລະ ຄາດຄະເນລາຄາຂາຍ. ດັ່ງນັ້ນ, ຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າຕໍ່ບັນຫາດັ່ງກ່າວ ລວມທັງການທຳຄວາມເຂົ້າໃຈບັນດາຂັ້ນຕອນພາຍໃນ ໃນການຕີມູນຄ່າເຄື່ອງໃນສາງຂອງບໍລິສັດ, ກວດສອບສະພາບຕົວຈິງຂອງເຄື່ອງໃນສາງ ແລະ ກວດມູນຄ່າສຸດທິຕົວຈິງທີ່ກ່ຽວຂ້ອງ. ການເປີດເຜີຍຂອງບໍລະສັດກ່ຽວກັບນະໂຍບາຍທາງບັນຊີທີ່ກ່ຽວຂ້ອງ ແລະ ລາຍລະອຽດຂອງການເປີດເຜີຍກ່ຽວກັບເຄື່ອງໃນສາງຂອງບໍລິສັດແມ່ນໄດ້ນຳສະເໜີໃນບົດອະທິບາຍເລກທີ 3 ແລະ ບົດອະທິບາຍເລກທີ 9.

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ທີ່ມີໜ້າທີ່ດູແລຕໍ່ກັບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ

ຄະນະອຳນວຍການຂອງບໍລິສັດແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ໂດຍສອດຄ່ອງກັບນະໂຍບາຍດ້ານການການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ, ການຄວບຄຸມພາຍໃນທີ່ຄະນະອຳນວຍການພິຈາລະນາວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ, ຄະນະອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ການເປີດເຜີຍຕາມຄວາມເໝາະສົມ, ບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ເວັ້ນເສຍແຕ່ ຄະນະອຳນວນການບໍລິສັດມີເຈດຕະນາຍົກເລີກກິດຈະການຂອງບໍລິສັດ ຫຼື ຢຸດກິດຈະການ, ຫຼື ບໍ່ມີທາງເລືອກອື່ນນອກຈາກການຢຸດຕິກິດຈະການ.

ຜູ້ທີ່ມີໜ້າທີ່ດູແລ ມີຄວາມຮັບຜິດຊອບຕໍ່ກັບການຄວບຄຸມຂັ້ນຕອນການລາຍງານເງິນຂອງບໍລິສັດ

ຂໍ້ມູນອື່ນໆ

ຄະນະອຳນວຍການຂອງບໍລິສັດແມ່ນມີຄວາມຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບມີຂໍ້ມູນທີ່ລວມຢູ່ໃນການທົບທວນຄືນການດຳເນີນທຸລະກິດ ແຕ່ບໍ່ໄດ້ລວມເອົາບົດລາຍງານທາງດ້ານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ແລະ ບົດລາຍງານຂອງຜູ້ກວດສອບຂອງພວກເຮົາ.

ຄວາມຄິດເຫັນຂອງພວກເຮົາກ່ຽວກັບເອກະສານລາຍງານທາງດ້ານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກເຮົາຈະບໍ່ສະແດງຄຳຄິດເຫັນຕໍ່ກັບຂໍ້ມູນດັ່ງກ່າວ.

ກ່ຽວກັບການກວດສອບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າມີຄວາມຮັບຜິດຊອບຕໍ່ການອ່ານຂໍ້ມູນອື່ນໆທີ່ກ່າວເຖິງຂ້າງເທິງ ຖ້າຫາກມີ, ພິຈາລະນາຫາກວ່າຂໍ້ມູນອື່ນໆບໍ່ສອດຄ່ອງທີ່ສຳຄັນກັບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ຫຼື ຂໍ້ມູນທີ່ໄດ້ຮັບໃນການກວດສອບ, ຫຼື ເປັນຂໍ້ຜິດພາດທີ່ສຳຄັນ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະຕໍ່ການກວດສອບເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອໄດ້ຮັບການຮັບປະກັນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບ ປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງ ບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.
- ສະຫຼຸບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະອຳນວຍການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງບໍລິສັດໃນສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຜູ້ທີ່ມີໜ້າທີ່ໃນການຄວບຄຸມກ່ຽວກັບບັນຫາເຫຼົ່ານັ້ນ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ, ປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ພວກຂ້າພະເຈົ້າ ໄດ້ໃຫ້ຖະແຫຼງການກັບຜູ້ທີ່ມີໜ້າທີ່ໃນການຄວບຄຸມວ່າ ພວກຂ້າພະເຈົ້າໄດ້ປະຕິບັດຕາມທຸກຂໍ້ກຳນົດດ້ານກົດຈັນຍາບັນທີ່ກຳນົດເຊິ່ງກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດມີເຫດຜົນທີ່ພວກຂ້າພະເຈົ້າຄວນຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າມີ.

A member firm of Ernst & Young Global Limited

Building a better working world

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຜູ້ທີ່ມີໜ້າທີ່ໃນການຄວບຄຸມກ່ຽວກັບບັນຫາຕ່າງໆ, ພວກຂ້າພະເຈົ້າພິຈະລະນາວ່າສິ່ງເຫຼົ່ານັ້ນເປັນສິ່ງທີ່ສຳຄັນທີ່ສຸດໃນການກວດສອບເອກະສານການເງິນໃນໄລຍະປະຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານັ້ນໃນບົດລາຍງານນັກກວດສອບອິດສະຫຼະຂອງພວກຂ້າພະເຈົ້າ. ເວັ້ນເສຍແຕ່ຖ້າມີກົດໝາຍ ຫຼື ຂໍ້ບັງຄັບທີ່ບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ຫຍຸ້ງຍາກພວກຂ້າພະເຈົ້າຫາກພິຈາລະນາວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານລົງໃນບົດລາຍງານຂອງພວກຂ້າພະເຈົ້າເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ

ຕາງໜ້າ ແລະ ໃນນາມບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ

ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ແອ້ັງ ຫວ໋ ຈິກ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ່ງລາວ ມະຫາຊົນ")

ໃບລາຍງານຖານະທາງການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ

ນະວັນທີ 31 ທັນວາ 2023

	ບົດອະທິບາຍ ເລກທີ	*31 ທັນວາ 2023 ກີບ*	*31 ທັນວາ 2022 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	569,628,666	3,569,273,346
ຊັບສິນພວມກໍ່ສ້າງ	6	33,848,808,652	5,965,924,208
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	5	3,689,043,755	328,548,475
ການລົງທຶນໃນ ບໍລິສັດໃນເຄືອ	7	1,189,235,074	-
ຊັບສິນບໍ່ໝຸນວຽນອື່ນໆ		-	147,280,000
ລວມຊັບສິນບໍ່ໝຸນວຽນ		**39,296,716,147**	**10,011,026,029**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	1,705,010,743	46,422,040
ເຄື່ອງໃນສາງ	9	6,880,835,715	10,868,847,852
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ		224,362,213	-
ໜີ້ຕ້ອງຮັບທາງການຄ້າ	10	2,464,105,715	2,463,928,625
ເງິນສົດ	11	1,606,207,716	643,463,064
ລວມຊັບສິນໝຸນວຽນ		**12,880,522,102**	**14,022,661,581**
ລວມຊັບສິນທັງໝົດ		**52,177,238,249**	**24,033,687,610**

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ້ງລາວ ມະຫາຊົນ")

ໃບລາຍງານຖານະທາງການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ
ນະວັນທີ 31 ທັນວາ 2023

	ບົດອະທິບາຍ ເລກທີ	*31 ທັນວາ 2023 ກີບ*	*31 ທັນວາ 2022 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສິ່ງການຄ້າ		1,441,398,721	1,047,905,716
ເງິນລ່ວງໜ້າຈາກລູກຄ້າ	12	20,274,717,670	127,773,000
ໜີ້ຕ້ອງສິ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	8,389,384,462	6,257,925,856
ພັນທະອາກອນ	13	6,109,246,395	5,178,864,580
ໜີ້ຕ້ອງສິ່ງໃຫ້ພະນັກງານ		8,019,276,919	9,083,230,303
ໜີ້ຕ້ອງສິ່ງອື່ນໆ	14	18,364,896,342	14,577,977,551
ລວມໜີ້ສິນໝຸນວຽນ		**62,598,920,509**	**36,273,677,006**
ລວມໜີ້ສິນທັງໝົດ		**62,598,920,509**	**36,273,677,006**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	15	20,002,000,000	20,002,000,000
ມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(75,063,175,913)	(76,881,483,050)
ລວມທຶນ		**(10,421,682,260)**	**(12,239,989,397)**
ລວມໜີ້ສິນ ແລະ ທຶນທັງໝົດ		**52,177,238,249**	**24,033,687,610**

ບໍລິສັດ ຊີມັ້ງລາວ ມະຫາຊົນ Lao Cement Public Company

ທ່ານ ເນັຍເຫຼ້ຍ
ຜູ້ອຳນວຍການໃຫຍ່

张经华

ທ່ານ ຈ່າງ ຈິ້ງ ຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ້ງລາວ ມະຫາຊົນ")

ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2023

	ບົດອະທິບາຍ ເລກທີ	*2023* ກີບ	*2022* ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ຂາດທຶນຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	16	24,108,787,955	2,464,852,716
ລາຍຈ່າຍຈາກການດຳເນີນງານອື່ນໆ	17	(9,810,203,397)	(18,176,290,928)
ເງິນແຮໜີ້ທອງຍາກ		-	(2,776,485,098)
ລາຍຈ່າຍໃນການດຳເນີນງານ	18	(11,325,016,316)	(7,417,425,881)
ຂາດທຶນຈາກການດຳເນີນງານ		**2,973,568,242**	**(25,905,349,191)**
ລາຍຮັບທາງການເງິນ	19	8,138,373	2,703,950,163
ຕົ້ນທຶນທາງການເງິນ	20	(1,163,399,478)	(265,972,635)
ກຳໄລ/(ຂາດທຶນ)ກ່ອນອາກອນ		**1,818,307,137**	**(23,467,371,663)**
ລາຍຈ່າຍອາກອນກຳໄລ	21	-	-
ກຳໄລ/(ຂາດທຶນ)ສຸດທິຫຼັງອາກອນພາຍໃນປີ		**1,818,307,137**	**(23,467,371,663)**

ບໍລິສັດ ຊີມັ້ງລາວ ມະຫາຊົນ Lao Cement Public Company

ທ່ານ ເມັ່ຍເຫຼັ່ຍ
ຜູ້ອຳນວຍການໃຫຍ່

张经华

ທ່ານ ຈ່າງ ຈິ່ງ ຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັງລາວ ມະຫາຊົນ")

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບຈຸດປະສົງພິເສດແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2023

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ມູນຄ່າຮຸ້ນ* *ກີບ*	*ຄັງສຳຮອງຕາມລະບຽບການ* *ກີບ*	*ຄັງສຳຮອງເພື່ອຂະຫຍາຍອາຄານ* *ກີບ*	*ກຳໄລສະສົມ/(ຂາດທຶນສະສົມ)* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2022	20,002,000,000	18,385,975,511	7,704,052,546	18,549,465,596	(53,414,111,387)	11,227,382,266
ກຳໄລສຸດທິພາຍໃນປີ	-	-	-	-	(23,467,371,663)	(23,467,371,663)
ນະວັນທີ 31 ທັນວາ 2022	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(76,881,483,050)**	**(12,239,989,397)**
ນະວັນທີ 1 ມັງກອນ 2023	20,002,000,000	18,385,975,511	7,704,052,546	18,549,465,596	(76,881,483,050)	(12,239,989,397)
ກຳໄລສຸດທິພາຍໃນປີ	-	-	-	-	1,818,307,137	1,818,307,137
ນະວັນທີ 31 ທັນວາ 2023	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(75,063,175,913)**	**(10,421,682,260)**

ທ່ານ ເມັຍເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງ ຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ່ງລາວ ມະຫາຊົນ")

ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

	ບົດອະທິບາຍ ເລກທີ	*2023 ກີບ*	*2022 ກີບ*
ກິດຈະກຳການດຳເນີນງານ			
ກຳໄລ/(ຂາດທຶນ)ກ່ອນອາກອນ		**1,818,307,137**	**(23,467,371,663)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	3,026,514,300	6,003,561,616
ເງິນແຮສຳລັບເຄື່ອງໃນສາງ		(610,550,245)	6,360,384,099
ເງິນແຮສຳລັບໜີ້ທວງຍາກ		(7,650,143,450)	2,776,485,098
ຂາດທຶນສຸດທິຈາກອັດຕາແລກປ່ຽນ		1,217,159,590	(2,459,572,919)
ກຳໄລຈາກກິດຈະກຳການລົງທຶນ		(8,794,535,894)	(626,830)
ລາຍຈ່າຍດອກເບ້ຍ	20	-	22,222,222
ການດັດແກ້ທຶນໝຸນວຽນ:			
ຫຼຸດລົງຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນ ທີ່ກ່ຽວຂ້ອງ		(222,082,236)	7,709,466,890
ຫຼຸດລົງ (ເພີ່ມຂຶ້ນ) ຂອງຊັບສິນໝຸນວຽນອື່ນໆ		(1,665,724,036)	-
ຫຼຸດລົງຂອງເຄື່ອງໃນສາງ		4,598,562,382	3,572,447,792
ຫຼຸດລົງຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		23,862,314,306	(845,303,561)
ລາຍຈ່າຍດອກເບ້ຍເງິນກູ້ຢືມ		-	(22,222,222)
ລາຍຮັບຈາກດອກເບ້ຍ		8,138,373	626,832
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**15,587,960,227**	**(349,902,646)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(22,420,000)	(38,000,000)
ເງິນສົດຈາກການຂາຍຊັບສິນບັດຄົງທີ່		8,794,535,894	220,000,000
ການຈັດຊື້ຊັບສິນຄົງທີ່ບໍ່ມີຕົວຕົນ		(3,273,189,600)	-
ເງິນສົດຈາກການຂາຍຊັບສິນບັດຄົງທີ່		55,524,700	-
ລາຍຮັບການລົງທຶນໃນບໍລິສັດໃນເຄືອ		(1,189,235,074)	-
ຊັບສິນພວມກໍ່ສ້າງ		(19,006,976,169)	-
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ		**(14,641,760,249)**	**182,000,000**

ກິດຈະກຳການເງິນ			
ການຊຳລະເງິນກູ້ຢືມທະນາຄານ		-	(2,000,000,000)
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		**-**	**(2,000,000,000)**
ເງິນສົດຫຼຸດລົງສຸດທິ		946,199,978	(2,167,902,646)
ເງິນສົດໃນຕົ້ນປີ		643,463,064	351,792,791
ອັດຕາແລກປ່ຽນເງິນຕາຕ່າງປະເທດ		16,544,674	2,459,572,919
ເງິນສົດໃນທ້າຍປີ	**11**	**1,606,207,716**	**643,463,064**

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ເນ້ຍເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ້ງ ຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

(ຊື່ເດີມ "ບໍລິສັດ ຊີມັ້ງລາວ ມະຫາຊົນ")

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສຳລັບຈຸດປະສົງພິເສດແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ຊື່ເດີມແມ່ນ ບໍລິສັດ ຊີມັ້ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ້ງ ລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນ ທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ("ຝ່າຍ ກ") ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ ("ຝ່າຍ ຂ").

ວັນທີ 6 ທັນວາ 1999, ບໍລິສັດໄດ້ຮັບໃບທະບຽນຄັ້ງທຳອິດເລກທີ 1154/ຈທກ ອອກໂດຍ ກະຊວງອຸດສະຫະກຳ ແລະ ການ ຄ້າ, ເຊິ່ງບໍລິສັດໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດກ່ຽວກັບຊີມັ້ງ ແລະ ຜະລິດຕະພັນຕ່າງໆທີ່ກ່ຽວຂ້ອງກັບຊີມັ້ງເພື່ອການ ຈຳໜ່າຍພາຍໃນ ແລະ ສົ່ງອອກ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດເລກທີ 0008/ຕລຊລ ອອກ ໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 20 ກຸມພາ 2018, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 0160/ຈທວ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ຈຳກັດ ມາເປັນ ບໍລິສັດ ຊີມັ້ງລາວ ມະຫາຊົນ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/MPI, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ.

ວັນທີ 30 ຕຸລາ 2023, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 3330/ຈທວ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ້ງລາວ ຈຳກັດ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ມະຫາຊົນ.

ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສິ້ງ ແລະ ການຂາຍຍ່ອຍຊີມັ້ງ ແລະ ຜະລິດຕະພັນຊີມັ້ງອື່ນໆທີ່ ກ່ຽວຂ້ອງ ມາເປັນການທ່ອງທ່ຽວ ແລະ ການກໍ່ສ້າງສວນວັດທະນະທຳ, ໂຮງແຮມ ແລະ ຕຶກອາຄານຄອນໂດ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ້ງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2023, ບໍລິສັດມີພະນັກງານ 52 ຄົນ (31 ທັນວາ 2022: ພະນັກງານ 46 ຄົນ)

2. ພື້ນຖານຂອງການກະກຽມ

ຈຸດປະສົງຂອງການກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ແລະ ເຫດຜົນຂອງການບໍ່ກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບສັງລວມກິດຈະການ

ບໍລິສັດມີບໍລິສັດໃນເຄືອດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 1 ແລະ ເລກທີ 23 ຂອງເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ. ບໍລິສັດໄດ້ກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການສຳລັບປີສິ້ນສຸດວັນທີ 31 ທັນວາ 2023 ຕາມກົດໝາຍວ່າດ້ວຍບັນຊີຂອງ ສປປ ລາວ ແລະ ຕາມກົດລະບຽບທີ່ກຳນົດໂດຍ ກະຊວງການເງິນຂອງ ສ.ປ.ປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີບົດລາຍງານການເງິນ ເຊິ່ງບໍ່ໄດ້ກຳນົດໃຫ້ບໍລິສັດທີ່ມີບໍລິສັດໃນເຄືອຈະຕ້ອງກະກຽມບົດລາຍງານການເງິນແບບສັງລວມກິດຈະການ ພາຍໃຕ້ນະໂຍບາຍບັນຊີທີ່ບໍລິສັດນຳໃຊ້ ແລະ ອະທິບາຍໃນບົດອະທິບາຍຊ້ອນທ້າຍເລກທີ 3.

ນອກຈາກນີ້, ອີງຕາມກົດໝາຍວ່າຫຼັກຊັບຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, ບໍລິສັດຈົດທະບຽນເຊິ່ງເປັນກຸ່ມບໍລິສັດຖືກກຳນົດໃຫ້ກະກຽມເອກະສານລາຍງານການເງິນແບບສັງລວມກິດຈະການ. ຢ່າງໃດກໍ່ຕາມ, ບໍລິສັດໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບສຳລັບການບໍ່ກະກຽມເອກະສານລາຍງານການເງິນແບບສັງລວມກິດຈະການສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023 ເນື່ອງຈາກບໍລິສັດພວມຢູ່ໃນຂັ້ນຕອນການຟື້ນຟູບໍລິສັດ ເຊິ່ງຖືກບັນທຶກໃນໜັງສືທາງການສະບັບເລກ 126/LCC ລົງວັນທີ 9 ເມສາ 2024 ຈາກບໍລິສັດຫາສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ.

ດັ່ງນັ້ນ, ບໍລິສັດບໍ່ໄດ້ກະກຽມເອກະສນງານການເງິນແບບສັງລວມກິດຈະການສຳລັບປີສິ້ນສຸດວັນທີ 31 ທັນວາ 2023.

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ບັນດາໜ່ວຍງານສາທາລະນະ ປະໂຫຍດ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫົວໜ່ວຍຖືຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາການສະໝັກ IFRS ໄປຈົນເຖິງວັນທີ 1 ມັງກອນ 2026.

ນະວັນທີ 31 ທັນວາ 2023, ບໍລິສັດໄດ້ກະກຽມເອກະສານລາຍງານການເງິນຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ເອກະສານລາຍງານການເງິນ. ນະໂຍບາຍການບັນຊີດັ່ງກ່າວ ບໍ່ໄດ້ມີຈຸດປະສົງໃນການນຳສະເໜີຖານະການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ, ຜົນຂອງການດຳເນີນງານສຳລັບຈຸດປະສົງພິເສດແບບແຍກກິດຈະການ ແລະ ກະແສເງິນສົດສຳລັບຈຸດປະສົງພິເສດແບບແຍກກິດຈະການຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການໄດ້ກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3. ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ ແມ່ນຖືກສະແດງເປັນສະກຸນເງິນກີບ ("ກີບ"). ເຊິ່ງແມ່ນສະກຸນເງິນຫຼັກໃນການເຮັດທຸລະກຳ ແລະ ຊາລະສະສາງຂອງບໍລິສັດ.

2. ພື້ນຖານຂອງການກະກຽມ (ຕໍ່)

ຄວາມສືບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດມີກຳໄລສຸດທິຫຼັງອາກອນ 1.8 ຕື້ກີບ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023. ນະວັນທີສິ້ນສຸດດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມ 75 ຕື້ກີບ ເຊິ່ງເກີນທຶນຈົດທະບຽນທີ່ຈັດສັນໄວ້ 55 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງບໍລິສັດຫຼາຍກວ່າຊັບສິນໝຸນວຽນ 49.7 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການຢຸດຜະລິດຊີມັ້ງຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ບໍລິສັດກຳລັງຫັນປ່ຽນຈາກການຜະລິດຊີມັ້ງສູ່ການທ່ອງທ່ຽວ, ການກໍ່ສ້າງສ່ວນວັດທະນະທຳ, ໂຮງແຮມ ແລະ ຕຶກຄອນໂດ. ເງື່ອນໄຂດັ່ງກ່າວຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງມີສາລະສຳຄັນກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ. ໃນມຸມມອງດັ່ງກ່າວບໍລິສັດສາມາດດຳເນີນທຸລະກິດໄດ້ຂຶ້ນກັບກະແສເງິນສົດຂອງການດຳເນີນກິດຈະການໃນອະນາຄົດ ແລະ/ຫຼື ການສືບຕໍ່ສະໜັບສະໜຸນທາງການເງິນຈາກເຈົ້າຂອງ.

ຄະນະບໍລິຫານຂອງບໍລິສັດໄດ້ຈັດແຜນທຸລະກິດ ແລະ ການເງິນທີ່ເໝາະສົມກັບການດຳເນີນງານຂອງບໍລິສັດ. ນອກຈາກນີ້ ,ຢູ່ນນານ ຊຽງຫານ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ໄດ້ຢືນຢັນຄວາມເຕັມໃຈ ແລະ ຄວາມສາມາດໃນການຈັດຫາເງິນທຶນທີ່ພຽງພໍໃຫ້ກັບບໍລິສັດ ເພື່ອໃຫ້ບໍລິສັດສາມາດດຳເນີນກິດຈະການຕໍ່ໄປໄດ້ໃນຊ່ວງ 12 ເດືອນຂ້າງໜ້າ, ຫາຈຳເປັນ. ບົນພື້ນຖານນີ້, ຄະນະອຳນວຍການຂອງບໍລິສັດ ຍັງຕ້ອງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການບົນພື້ນຖານຄວາມສືບເນື່ອງຂອງການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ເມື່ອລາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານ ຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນ, ອາຄານ ແລະ ອຸປະກອນ ທີ່ຖືກຫັກຄ່າຫຼ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຍຫ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີກ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄ່າຫຼ້ຽມຫ້ຽນ

ຄ່າຫຼ້ຽມຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະໝ່ຳສະເໝີຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຝ່າຍອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼ້ຽມຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະສ້າງອອກພາຍໃນປີ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສ້າງອອກຕົວຈິງ. ບໍ່ມີການຫັກຄ່າຫຼ້ຽມຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບດ້ວຍຄອມພິວເຕີຊອບແວ ແລະ ສິດໃນການນຳໃຊ້ທີ່ດິນ. ຕົ້ນທຶນຂອງຊອບແວປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ຕິດພັນໃນການເຮັດໃຫ້ຊອບແວສາມາດນຳໃຊ້ໄດ້.

ສິດໃນການນຳໃຊ້ທີ່ດິນທີ່ບໍ່ກຳນົດໄລຍະເວລາການນຳໃຊ້ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ສັນຍາເຊົ່າ

ໃນການກຳນົດຕົກລົງເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

ບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ເຊິ່ງຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາບໍລິສັດເປັນສາລະສຳຄັນຄືສັນຍາເຊົ່າດຳເນີນງານ. ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປະຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	– ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	– ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ການລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການ. ກຸ່ມບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກສັງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ກຸ່ມບໍລິສັດ ໃນເອກະສານລາຍງານການເງິນສັງລວມ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມຢຸດເຊົາ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງກຸ່ມບໍລິສັດແມ່ນຈະຖືກລົບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນ (ບົດອະທິບາຍເລກທີ 7).

ໃນເອກະສານລາຍງານການເງິນແບບແຍກກິດຈະການ, ເງິນລົງທຶນໃນບໍລິສັດໃນເຄືອແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ

ເງິນຮັບສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນຮັບສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເງິນຮັບແມ່ນບັນທຶກເຂົ້າຕົ້ນທຶນໃນການຂາຍ ແລະ ການຈຳໜ່າຍ ສະແດງໃນໃບລາຍງານຜົນການດຳເນີນງານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະ ນີທີ່ຖອກທຶນ ຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະ ບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນ.

ຄ້ຳສຳຮອງມູນຄ່າຮຸ້ນ

ມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄັ່ງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 26 ທັນວາ 2013, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັ່ງແຮຕາມລະບຽບການ.

ຄັ່ງສຳຮອງຕາມລະບຽບການເປັນຄັ່ງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງແມ່ນສິບເປີເຊັນ (10%) ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັ່ງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັ່ງສຳຮອງດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັ່ງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັ່ງສຳຮອງອື່ນໆປະກອບມີ ຄັ່ງສຳຮອງສະຫວັດດີການ ແລະ ຄັ່ງສຳຮອງເພື່ອຂະຫຍາຍອາຄານ ເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີ່ງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ຈຳນວນເງິນທີ່ເໝາະສົມຈະຖືກກຳນົດໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັ່ງສຳຮອງຂອງປີການບັນຊີປະຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນ ຖືກລາຍງານເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ. ກຳໄລ ແລະ ຂາດທຶນທັງ ໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານ.

ການຮັບຮູ້ລາຍຮັບ

ລາຍຮັບຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຖືກຮັບຮູ້ເມື່ອຄວາມສ່ຽງອັນເປັນສາລະສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຍື່ນສິ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ອາກອນຕ້ອງສົ່ງອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ຕ້ອງຈ່າຍ ໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ຄູ່ສັນຍາຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ໃນກໍລະນີທີ່ບໍ່ມີລາຄາຕະຫຼາດໃນລາຄາທີ່ຕົກລົງຕາມສັນຍາ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ກ່ຽວຂ້ອງກັບໂຮງງານທີ່ຢຸດຊົ່ວຄາວຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນການດຳເນີນງານອື່ນ.

ຂໍ້ມູນສ່ວນຕ່າງໆ

ສ່ວນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍບໍລິສັດເຊິ່ງປະກອບທຸລະກິດການສະໜອງສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນການຜະລິດ ແລະ ຈຳໜ່າຍປູນ ແລະ ຜະລິດຕະພັນອື່ນໆທີ່ກ່ຽວຂ້ອງກັບປູນ. ນັ້ນຈາກນີ້, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມສ່ວນງານ

4. ຊັບສິນ, ອາຄານ ແລະ ອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ	*ເຄື່ອງຈັກ ແລະ ອຸປະກອນ*	*ພາຫະນະຂົນສົ່ງ*	*ການປັບປຸງສິດທິໃນ ການເຊົ່າ*	*ເຄື່ອງໃຊ້ຫ້ອງການ*	*ອື່ນໆ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ							
ທີ 1 ມັງກອນ 2023	134,382,315,687	212,710,511,562	21,688,472,198	1,855,693,263	2,088,589,576	436,983,816	373,162,566,102
ຮັບເຂົ້າເພີ່ມ	-	-	-	-	22,420,000	-	22,420,000
ສະສາງອອກ	-	(730,329,600)	(6,280,801,027)	-	-	-	(7,011,130,627)
ທີ 31 ທັນວາ 2023	134,382,315,687	211,980,181,962	15,407,671,171	1,855,693,263	2,111,009,576	436,983,816	366,173,855,475
ຄ່າຫຼ້ຍຫ້ຽນສະສົມ							
ທີ 1 ມັງກອນ 2023	133,038,621,827	211,559,068,574	20,662,628,285	1,807,400,678	2,088,589,576	436,983,816	369,593,292,756
ຫັກຄ່າຫຼ້ຍຫ້ຽນໃນປີ	1,343,693,860	1,151,442,988	475,843,913	48,292,585	2,791,334	-	3,022,064,680
ສະສາງອອກ	-	(730,329,600)	(6,280,801,027)	-	-	-	(7,011,130,627)
ທີ 31 ທັນວາ 2023	134,382,315,687	211,980,181,962	14,857,671,171	1,855,693,263	2,091,380,910	436,983,816	365,604,226,809
ມູນຄ່າສຸດທິຕາມບັນຊີ							
ທີ 1 ມັງກອນ 2023	1,343,693,860	1,151,442,988	1,025,843,913	48,292,585	-	-	3,569,273,346
ທີ 31 ທັນວາ 2023	-	-	550,000,000	-	19,628,666	-	569,628,666

5. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ຊອບແວ	*ສິດການນຳໃຊ້ທີ່ດິນ*	*ລວມ*
	ກີບ	*ກີບ*	*ກີບ*
ຕົ້ນທຶນ			
ທີ 1 ມັ້ງກອນ 2023	-	328,548,475	328,548,475
ຮັບເຂົ້າເພີ່ມ	38,139,600	3,382,330,000	3,420,469,600
ອື່ນໆ	-	(55,524,700)	(55,524,700)
ທີ 31 ທັນວາ 2023	38,139,600	3,655,353,775	3,693,493,375
ຄ່າຫຼ້ຽຫ້ຽນສະສົມ			
ທີ 1 ມັ້ງກອນ 2023	-	-	-
ຫັກຄ່າຫຼ້ຽຫ້ຽນໃນປີ	4,449,620	-	4,449,620
ທີ 31 ທັນວາ 2023	4,449,620	-	4,449,620
ມູນຄ່າສຸດທິຕາມບັນຊີ			
ທີ 1 ມັ້ງກອນ 2023	-	328,548,475	328,548,475
ທີ 31 ທັນວາ 2023	33,689,980	3,655,353,775	3,689,043,755

6. ຊັບສິນພວມກໍ່ສ້າງ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,966,361,212	5,965,924,208
ກໍ່ສ້າງອາຄານ 21	27,518,092,056	-
ໂຄງການກໍ່ສ້າງເຮືອນພັກ	269,752,000	-
ໂຄງການກໍ່ສ້າງໜອງບອນ	52,484,784	-
ໂຄງການກໍ່ສ້າງລິສອດ-ໂຮງແຮມ	42,118,600	-
	33,848,808,652	**5,965,924,208**

7. ການລົງທຶນໃນບໍລິສັດໃນເຄືອ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ບໍລິສັດໃນເຄືອ		
ບໍລິສັດ ສະໜຸນໄພຈິ່ງເຄີ(ລາວ) ຈຳກັດຜູ້ດຽວ (i)	558,564,000	-
ບໍລິສັດ ສະໜຸນໄພຈິ່ງເຄີ(ລາວ) ຈຳກັດຜູ້ດຽວ (ii)	630,671,074	-
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ (iii)	-	-
	1,189,235,074	**-**

(i) ວັນທີ 14 ມີນາ 2023, ບໍລິສັດໄດ້ສ້າງຕັ້ງ ບໍລິສັດ ສະໜຸນໄພຈິ່ງເຄີ(ລາວ) ຈຳກັດຜູ້ດຽວ ເຊິ່ງເປັນບໍລິສັດທີ່ຈັດຕັ້ງຂຶ້ນໃນ ສປປ ລາວ ໂດຍທຶນຈົດທະບຽນ 1,000 ລ້ານກີບ. ກິດຈະກຳຫຼັກຂອງ ບໍລິສັດ ສະໜຸນໄພຈິ່ງເຄີ(ລາວ) ຈຳກັດຜູ້ດຽວ ແມ່ນການປູກຝັງ ແລະ ການນຳເຂົ້າພືດສະໜຸນໄພ.

(ii) ວັນທີ 14 ມິຖຸນາ 2023, ບໍລິສັດໄດ້ສ້າງຕັ້ງ ບໍລິສັດ ກໍ່ສ້າງ ພັດທະນາ ຕິວເມືອງລາວ ຈຳກັດຜູ້ດຽວ ເຊິ່ງເປັນບໍລິສັດທີ່ຈັດຕັ້ງຂຶ້ນໃນ ສປປ ລາວ ໂດຍທຶນຈົດທະບຽນ 5,000 ລ້ານກີບ. ກິດຈະກຳຫຼັກຂອງ ບໍລິສັດ ກໍ່ສ້າງ ພັດທະນາ ຕິວເມືອງລາວ ຈຳກັດຜູ້ດຽວ ແມ່ນໃຫ້ບໍລິການທາງດ້ານການກໍ່ສ້າງ.

(iii) ວັນທີ 08 ສິງຫາ 2023, ບໍລິສັດໄດ້ສ້າງຕັ້ງ ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ ເຊິ່ງເປັນບໍລິສັດທີ່ຈັດຕັ້ງຂຶ້ນໃນ ສປປ ລາວ ໂດຍທຶນຈົດທະບຽນ 20,000 ລ້ານກີບ. ກິດຈະກຳຫຼັກຂອງ ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ ແມ່ນການຈັດຫາວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ.

8. ຊັບສິນໝຸນວຽນອື່ນໆ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	1,045,274,299	46,422,040
ເງິນອື່ນໆ	659,736,444	-
	1,705,010,743	**46,422,040**

9. ເຄື່ອງໃນສາງ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງ	1,250,456,423	1,324,092,176
ອຸປະກອນ ແລະ ເຄື່ອງມື	6,771,477,945	10,317,849,338
ສິນຄ້າພວມຜະລິດ	9,139,216,605	10,117,771,841
ສິນຄ້າສຳເລັດຮູບ	773,052,367	773,052,367
ເງິນແຮສຳລັບເຄື່ອງໃນສາງ	(11,053,367,625)	(11,663,917,870)
	6,880,835,715	**10,868,847,852**

10. ໜີ້ຕ້ອງຮັບທາງການຄ້າ

	31 ທັນວາ 2023 *ກີບ*	*31 ທັນວາ 2022* *ກີບ*
ໜີ້ຕ້ອງຮັບການຄ້າ	2,907,725,672	10,557,692,032
ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ	(443,619,957)	(8,093,763,407)
	2,464,105,715	**2,463,928,625**

ລາຍລະອຽດຂອງ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2023 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(443,619,957)	(443,619,957)
ລວມ	**(443,619,957)**	**(443,619,957)**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທວງຍາກ ນະວັນທີ 31 ທັນວາ 2022 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	8,093,763,407	8,093,763,407
ລວມ	**8,093,763,407**	**8,093,763,407**

11. ເງິນສົດ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ເງິນສົດໃນຄັງ	51,939,545	449,123,078
ເງິນຝາກທະນາຄານ	1,554,268,171	194,339,986
	1,606,207,716	**643,463,064**

12. ເງິນລ່ວງໜ້າຈາກລູກຄ້າ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ເງິນລ່ວງໜ້າຈາກຜູ້ຊື້ຕາມສັນຍາສະສາງຊັບສິນ	18,537,768,000	109,773,000
ເງິນລ່ວງໜ້າຈາກການຈອງຄອນໂດ	1,716,949,670	-
ເງິນລ່ວງໜ້າອື່ນໆຈາກລູກຄ້າ	20,000,000	18,000,000
	20,274,717,670	**127,773,000**

13. ພັນທະອາກອນ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ອາກອນຕ້ອງສົ່ງຈາກຜູ້ສະໜອງຕ່າງປະເທດ	3,058,050,485	3,058,050,485
ອາກອນມູນຄ່າເພີ່ມສິ້ນອອກ	1,240,616,125	331,786,100
ໜີ້ຕ້ອງສົ່ງອາກອນກຳໄລ (ບົດອະທິບາຍເລກທີ 20)	479,656,526	479,656,526
ອາກອນອື່ນໆ	1,330,923,259	1,309,371,469
	6,109,246,395	**5,178,864,580**

14. ໜີ້ຕ້ອງສົ່ງອື່ນໆ

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ໜີ້ຕ້ອງສົ່ງເງິນປັນຜົນໃຫ້ພາກສ່ວນກ່ຽວຂ້ອງ (ບົດອະທິບາຍເລກທີ 21) (*)	13,581,363,960	13,581,363,960
ອື່ນໆ	4,783,532,382	996,613,591
	18,364,896,342	**14,577,977,551**

14. ໜີ້ຕ້ອງສົ່ງອື່ນໆ (ຕໍ່)

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	31 ທັນວາ 2023	*31 ທັນວາ 2022*
	ກີບ	*ກີບ*
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

15. ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ

15.1 ຮຸ້ນ

	31 ທັນວາ 2023		*31 ທັນວາ 2022*	
	ຈຳນວນ (ຮຸ້ນ)	*ມູນຄ່າ (ກີບ)*	*ຈຳນວນ (ຮຸ້ນ)*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນ ຕະຫຼາດຫຼັກຊັບລາວ.

15. ທຶນຈົດທະບຽນຕາມກົດໝາຍທີ່ຖອກແລ້ວ (ຕໍ່)

15.1 ຮຸ້ນ (ຕໍ່)

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2023 ແລະ 31 ທັນວາ 2022 ມີດັ່ງນີ້:

	31 ທັນວາ 2023		*31 ທັນວາ 2022*	
Shareholders	*ຈຳນວນ (ຮຸ້ນ)*	*ເປີເຊັ້ນ*	*ຈຳນວນ (ຮຸ້ນ)*	*ເປີເຊັ້ນ*
Yunnan Qianhan Technology Network Limited ("Yunnan Qianhan")	14,280,000	35.696%	14,280,000	35.6964%
Lao Agriculture-Forestry Development and Service Company (DAI)	13,720,000	34.297%	13,720,000	34.2966%
ບໍລິສັດ ຫຼັກຊັບລາວ - ຈີນ (LCS)	7,547,800	18.868%	7,547,800	18.8676%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%	4,456,200	11.1394%
	40,004,000		**40,004,000**	

16. ລາຍຮັບຈາກການຂາຍສິນຄ້າ

	2023 ກີບ	*2022 ກີບ*
ລາຍໄດ້ຈາກການຂາຍອັດຖຸດິບ, ເສດເຫຼັກ ແລະ ຊັບສົມບັດຄົງທີ່	12,350,399,288	1,520,350,878
ເກັບຄືນເງິນແຮສຳຫຼັບໜີ້ເສຍ	7,650,143,450	-
ເກັບຄືນເງິນແຮສຳຫຼັບຄ່າເສື່ອມສິນຄ້າໃນສາງ	610,550,245	-
ອື່ນໆ	3,497,694,972	944,501,838
	24,108,787,955	**2,464,852,716**

17. ລາຍຈ່າຍການດຳເນີນງານອື່ນໆ

ລາຍຈ່າຍຫຼັກທີ່ກ່ຽວຂ້ອງ

	2023 *ກີບ*	*2022* *ກີບ*
ຄ່າຫຼ້ຍຫ້ຽນຂອງໂຮງງານທີ່ຢຸດຊົ່ວຄາວ	2,809,950,490	5,895,139,412
ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ	-	6,360,384,099
ລາຍຈ່າຍໃຫ້ພະນັກງານ	1,538,474,388	516,923,150
ສາທາລະນຸປະໂພກ ແລະ ນ້ຳມັນ	231,908,051	190,672,561
ຄ່າໃຊ້ຈ່າຍໃນການກຳຈັດວັດຖຸດິບ	4,754,291,346	3,336,013,921
ອື່ນໆ	475,579,122	1,877,157,785
	9,810,203,397	**18,176,290,928**

18. ລາຍຈ່າຍໃນການບໍລິຫານ

	2023 *ກີບ*	*2022* *ກີບ*
ລາຍຈ່າຍໃຫ້ພະນັກງານ	6,609,121,196	4,825,910,675
ລາຍຈ່າຍທາງເທັກນິກ	8,000,000	582,746,161
ລາຍຈ່າຍຄ່າຫຼ້ຍຫ້ຽນ	216,563,810	108,422,204
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	415,621,344	157,748,920
ລາຍຈ່າຍຄ່າເຊົ່າ	230,016,914	6,508,412
ລາຍຈ່າຍຄ່າບຳລຸງຮັກສາ	511,556,703	52,494,000
ລາຍຈ່າຍຄ່າການພິມ ແລະ ເຜີຍແຜ່	35,620,800	30,069,253
ລາຍຈ່າຍຄ່າເດີນທາງ	554,334,624	370,571,244
ລາຍຈ່າຍເຄື່ອງໃຊ້ສຳນັກງານ	187,019,786	7,172,397
ລາຍຈ່າຍຕ້ອນຮັບແຂກ ແລະ ການປັນເທີງ	477,340,801	239,832,900
ສ່ວນຫຼຸດໃຫ້ລູກຄ້າ	207,381,850	127,206,325
ລາຍຈ່າຍຄ່າກວດສອບ	739,206,000	516,600,000
ລາຍຈ່າຍໃນການບໍລິຫານອື່ນໆ	1,133,232,488	392,143,390
	11,325,016,316	**7,417,425,881**

19. ລາຍຮັບທາງການເງິນ

	2023 *ກີບ*	*2022* *ກີບ*
ລາຍຮັບດອກເບ້ຍ	8,138,373	626,831
ກຳໄລຈາກອັດຕາແລກປ່ຽນ	-	2,703,323,332
	8,138,373	**2,703,950,163**

20. ຕົ້ນທຶນທາງການເງິນ

	2023 *ກີບ*	*2022* *ກີບ*
ລາຍຈ່າຍດອກເບ້ຍ	-	22,222,222
ຂາດທຶນຈາກອັດຕາແລກປ່ຽນ	1,163,399,478	243,750,413
	1,163,399,478	**265,972,635**

21. ອາກອນກຳໄລ

ອີງຕາມໃບຢັ້ງຢືນການລົງທຶນ ສະບັບປັບປຸງ ວັນທີ 17 ພະຈິກ 1998, ບໍລິສັດແມ່ນຈະຖືກຍົກເວັ້ນອາກອນກຳໄລ ສຳລັບ ສີ່ປີເລີ່ມຈາກປີທຳອິດທີ່ໄດ້ຮັບກຳໄລ ແລະ ຈະຫຼຸດລົງ 50% ຂອງອາກອນກຳໄລທີ່ປະກາດໃຊ້ສຳລັບສອງປີຖັດ ໄປ. ບໍລິສັດມີພັນທະໃນການຈ່າຍອາກອນກຳໄລ (ອກລ)ໃນອັດຕາ 20% ຫຼັງຈາກໄລຍະເວລາຍົກເວັ້ນອາກອນ. ຜົນກຳໄລປີທຳອິດ ແມ່ນທ້າຍປີການບັນຊີ ນະວັນທີ 31 ທັນວາ 2005.

ບໍລິສັດໄດ້ຈົດທະບຽນກັບຕະຫຼາດຫຼັກຊັບລາວນັບແຕ່ 2 ມິນາ 2018. ອີງຕາມໜັງສືແຈ້ງການເລກທີ 2618/ກສອ ລົງວັນທີ 4 ມິຖຸນາ 2018 ຈາກກະຊວງ ການເງິນ, ບໍລິສັດ ໄດ້ຮັບອະນຸຍາດໃຫ້ຫຼຸດອາກອນກຳໄລ 5% ຈາກອັດຕາອາກອນປົກກະຕິ ສຳລັບ ສີ່ ປີທຳອິດຈາກປີ 2018 ຫາ 2021. ຫຼັງຈາກນັ້ນ, ບໍລິສັດມີພັນທະໃນການຈ່າຍອາກອນກຳໄລໃນອັດຕາປົກກະຕິ ທີ່ນຳໃຊ້. ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 (ໃຊ້ແທນກົດ ໝາຍວ່າ ດ້ວຍອາກອນກຳໄລ ເລກທີ 70/ສພຊ) ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກວັນທີ 1 ມັງກອນ 2020, ອາກອນກຳໄລ ໃນ ອັດຕາ 13% ແມ່ນຖືກນຳໃຊ້ກັບບໍລິສັດ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ສຳລັບໄລຍະສີ່ປີນັບແຕ່ວັນທີ່ຈົດທະບຽນ ແລະ ອັດຕາ 20% ສຳລັບປີຕໍ່ໄປ. ດັ່ງນັ້ນ, ລາຍໄດ້ຂອງອາກອນກຳໄລຂອງບໍລິສັດ ສຳລັບປີ 2023 ແມ່ນຈະຖືກນຳໃຊ້ໃນອັດຕາ 20%.

ການມອບອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍ ສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນ ອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍ ການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນ.

21. ອາກອນກຳໄລ (ຕໍ່)

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

	2023	ສະກຸນເງິນ: ກີບ 2022
ກຳໄລກ່ອນຫັກອາກອນ	**1,818,307,137**	**(23,467,371,663)**
ດັດແກ້ເພື່ອຫຼຸດຂາດທຶນກ່ອນຫັກອາກອນ:		
ເງິນແຮສຳລັບເຄື່ອງໃນສາງ	-	6,360,384,099
ເງິນແຮສຳລັບຄ່າເສື່ອມມູນຄ່າ (ບົດອະທິບາຍເລກທີ 16)	(7,650,143,450)	2,776,485,098
ລາຍຮັບທີ່ບໍ່ຖືເປັນລາຍຮັບ	699,649,070	-
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	3,796,823,105	1,004,872,034
ຄາດຄະເນອາກອນຂາດທຶນຕ້ອງມອບໃນປີ	**(1,335,364,138)**	**(13,325,630,431)**
ຄາດຄະເນລ່ວງໜ້າອາກອນກຳໄລພາຍໃນປີໃນອັດຕາ 20 % (2021: 13%)	-	-
ອາກອນກຳໄລຕ້ອງຈ່າຍຕົ້ນປີ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນປີ		-
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍເລກທີ 13)	**479,656,526**	**479,656,526**

ຂາດທຶນທາງອາກອນຍົກໄປຫັກຕໍ່

ສຳລັບການຂາດທຶນທາງອາກອນເກີດຂຶ້ນໃນປີ 2020 ແລະ ໃນປີຕໍ່ໜ້າ, ອີງຕາມກົດໝາຍອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາທີ່ 23, ຂາດທຶນປະຈຳປີເຊິ່ງໄດ້ຮັບການຮັບຮອງໂດຍໜ່ວຍງານກວດສອບ ຫຼື ບໍລິສັດ ກວດສອບບັນຊີອິດສະຫຼະ ແລະ ໄດ້ຮັບການຍອມຮັບຈາກເຈົ້າໜ້າທີ່ສ່ວຍສາອາກອນ, ມີສິດຍົກໄປຫັກຕໍ່ກັບອາກອນກຳໄລ ໃນຊ່ວງໄລຍະເວລາ 5 ປີ ຫລັງຈາກເກີດການຂາດທຶນທາງອາກອນ.

ຂາດທຶນທາງອາກອນໃນປີ 2019 ແລະ ປີຄືນຫລັງມີສິດຍົກໄປຫັກຕໍ່ກັບອາກອນກຳໄລໃນຊ່ວງໄລຍະເວລາ 3 ປີ ຫລັງຈາກ ເກີດການຂາດທຶນທາງອາກອນ, ອີງຕາມກົດໝາຍສະບັບກ່ອນ.

21. ອາກອນກຳໄລ (ຕໍ່)

ນະວັນທີບົດລາຍງານຖານະການເງິນ, ບໍລິສັດ ມີຂາດທຶນທາງອາກອນສະສົມທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ຮອດປີ*	*ມູນຄ່າຂາດທຶນທາງອາກອນ*	*ນຳໃຊ້ຮອດ ວັນທີ 31 ທັນວາ 2022*	*ປັບໄໝ*	*ບໍ່ທັນນຳໃຊ້ນະວັນທີ 31 ທັນວາ 2021*
2019	2022	22,074,986,857	-	(22,074,986,857)	-
2020	2025	34,611,776,360	-	-	34,611,776,360
2021	2026	12,384,451,613	-	-	12,384,451,613
2022	2027	13,325,630,431	-	-	13,325,630,431
2023	2028	1,945,914,383	-	-	1,945,914,383
ລວມ		**84,342,759,644**	**-**	**(22,074,986,857)**	**62,267,772,787**

ຂາດທຶນທາງອາກອນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ສຳລັບປີ 2019, 2020, 2021, 2022 ແລະ 2023 ແມ່ນຍັງບໍ່ທັນໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນ.

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2023 ກີບ*	*2022 ກີບ*
Yunnan Qianhan Technology Network Limited ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	3,220,310,863	1,883,107,316

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2023 ແລະ ວັນທີ 31 ທັນວາ 2022 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2023*	*31 ທັນວາ 2022*
			ກີບ	*ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Zhong Que Herbs Lao Co., LTD	ບໍລິສັດໃນເຄືອ	ການລົງທຶນ	558,564,000	-
		ເງິນລ່ວງໜ້າ	16,509,801	-
Lao City Construction Development Sole Co., LTD	ບໍລິສັດໃນເຄືອ	ການລົງທຶນ	630,671,074	-
		ເງິນລ່ວງໜ້າ	140,185,912	-
Lao New Building Materials Sole Co., LTD	ບໍລິສັດໃນເຄືອ	ການລົງທຶນ	-	-
		ເງິນລ່ວງໜ້າ	67,666,500	-
			1,413,597,287	**-**

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2023 ແລະ ວັນທີ 31 ທັນວາ 2022 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2023*	*31 ທັນວາ 2022*
			ກີບ	*ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Yunnan Qianhan Technology Network Limited ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	3,220,310,863	1,883,107,316
		ເງິນກູ້ຢືມ	794,255,059	-
Lao Agriculture-Forestry Development and Service Company (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,374,818,540	4,374,818,540
			8,389,384,462	**6,257,925,856**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2023 ກີບ*	*31 ທັນວາ 2022 ກີບ*
ໜີ້ຕ້ອງສົ່ງອື່ນໆ (ບົດອະທິບາຍ ເລກທີ 13)				
Yunnan Qianhan Technology Network Limited ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	7,736,383,104	7,736,383,104
Lao Agriculture-Forestry Development and Service Company (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະອຳນວຍການພາຍໃນປີມີດັ່ງລຸ່ມນີ້:

	2023 ກີບ	*2022 ກີບ*
ເງິນເດືອນ ແລະ ໂບນັດ	1,691,969,253	481,690,689
	1,691,969,253	**481,690,689**

23. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2023 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນສຳລັບຈຸດປະສົງພິເສດແບບແຍກກິດຈະການ.

24. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການສຳລັບຈຸດປະສົງພິເສດແບບແຍກກິດຈະການເງິນນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2023 ແມ່ນໄດ້ຖືກອະນຸມັດໂດຍຄະນະອຳນວຍການຂອງບໍລິສັດ ໃນວັນທີ 11 ເມສາ 2024.

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ທ່ານ ເນ້ຍເຫຼຍ
ຜູ້ອຳນວຍການໃຫຍ່

张经华

ທ່ານ ຈ່າງ ຈິ່ງ ຫົວ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

12 ເມສາ 2024